# ແຈ້ງການ ເຖິງບັນດາຮ້ານຂາຍຍ່ອຍຢາ ໃນຂອບເຂດທົ່ວປະເທດ



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 214013-14

ເລກທີ 5003/ກອຢ
ນະຄອນຫຼວງວຽງຈັນ, ວັນທີ 25 APR 2022

**ໜັງສືແຈ້ງການ**

**ເຖິງ:** ບັນດາຮ້ານຂາຍຍ່ອຍຢາໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຈໍລະຈອນຈຳໜ່າຍຜະລິດຕະພັນຢາປິ່ນປົວໂຄວິດ-19 ແລະ ເຄື່ອງທົດສອບແບບໄວ AgRDT (ຫຼື Antigen Test Kit, ATK) ກວດວິເຄາະການຕິດເຊື້ອໂຄວິດ-19.

- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 07/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ຄຳສັ່ງວ່າດ້ວຍການນຳເຂົ້າ, ຈໍລະຈອນຈຳໜ່າຍ ແລະ ນຳໃຊ້ ເຄື່ອງທົດສອບແບບໄວ AgRDT ເພື່ອກວດວິເຄາະຊອກຫາການຕິດເຊື້ອໂຄວິດ-19 ສະບັບເລກທີ 3994/ສທ, ລົງວັນທີ 30 ທັນວາ 202;
- ອີງຕາມ ຜົນການລົງຕິດຕາມ, ກວດກາຜະລິດຕະພັນປ້ອງກັນ ແລະ ປິ່ນປົວໂຄວິດ-19 ຢູ່ນະຄອນຫຼວງວຽງຈັນໃນລະຫວ່າງວັນທີ 6-7 ເມສາ 2022.

ຜ່ານການລົງຕິດຕາມ, ກວດກາການຈໍລະຈອນຈຳໜ່າຍຜະລິດຕະພັນຢາປິ່ນປົວໂຄວິດ-19 ແລະ ເຄື່ອງທົດສອບແບບໄວ AgRDT (ຫຼື Antigen Test Kit, ATK) ກວດວິເຄາະການຕິດເຊື້ອໂຄວິດ-19 ໂດຍກົມອາຫານ ແລະ ຢາ ສົມທົບກອງກວດກາອາຫານ ແລະ ຢາ ແລະ ພາກສ່ວນກ່ຽວຂ້ອງ ເຫັນວ່າ ມີສະພາບການຈໍລະຈອນຈຳໜ່າຍ ທີ່ບໍ່ຖືກຕ້ອງຕາມລະບຽບການຢ່າງແຜ່ຫຼາຍ ໃນບັນດາຮ້ານຂາຍຍ່ອຍຢາ ເຊິ່ງເປັນບັນຫາຫຼັກ ທີ່ສົ່ງຜົນກະທົບຕໍ່ການ ຮັບປະກັນດ້ານຄວາມປອດໄພ, ຄຸນນະພາບ ແລະ ປະສິດທິພາບໃນການກວດວິເຄາະ ແລະ ປິ່ນປົວໂຄວິດ-19 ຈຶ່ງໄດ້ມີການຍຶດອາຍັດ ແລະ ປັບໄໝຕາມລະບຽບການ.

ສະນັ້ນ ກົມອາຫານ ແລະ ຢາ ຈຶ່ງແຈ້ງມາຍັງບັນດາຮ້ານຂາຍຍ່ອຍຢາໃນຂອບເຂດທົ່ວປະເທດ ຈົ່ງຈັດຊື້ ແລະ ຈໍລະຈອນຈຳໜ່າຍຢາປິ່ນປົວໂຄວິດ-19 ແລະ ເຄື່ອງທົດສອບແບບໄວ AgRDT ກວດວິເຄາະການຕິດເຊື້ອໂຄວິດ-19 ທີ່ໄດ້ຮັບອະນຸຍາດຈາກກົມອາຫານ ແລະ ຢາ ເທົ່ານັ້ນ ໂດຍຕິດຕາມຂໍ້ມູນຂ່າວສານບັນດາລາຍການທີ່ໄດ້ຮັບອະນຸຍາດຜ່ານເວັບໄຊ ແລະ ເຟດບຸກຂອງກົມອາຫານ ແລະ ຢາ (ລາຍລະອຽດດັ່ງເອກະສານຄັດຕິດ 1, 2 ແລະ 3). ໃນກໍລະນີເຈົ້າໜ້າທີ່ລົງຕິດຕາມ, ກວດກາ ພົບການຈໍລະຈອນຈຳໜ່າຍທີ່ບໍ່ຖືກຕ້ອງ ຈະດຳເນີນການຍຶດອາຍັດ, ປັບໄໝ ແລະ ປະຕິບັດມາດຕະການຕໍ່ຮ້ານຂາຍຍ່ອຍຢານັ້ນຕາມລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ຫົວໜ້າກົມ

ປອ. ດຣ. ບຸນຊູ ແກ້ວທາວົງ

ການຈໍລະຈອນຈຳໜ່າຍຜະລິດຕະພັນຢາປິ່ນປົວໂຄວິດ-19 ແລະ ເຄື່ອງທົດສອບແບບໄວ AGRDT ຫຼື ANTIGEN TEST KIT (ATK) ກວດວິເຄາະການຕິດເຊື້ອໂຄວິດ-19.




**ກົມອາຫານແລະຢາ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

5003

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ
ໂທ: 214013-14

ເລກທີ ............/ກອຢ

ນະຄອນຫຼວງວຽງຈັນ, ວັນທີ 25 APR 2022

# ໜັງສືແຈ້ງການ

**ເຖິງ:** ບັນດາຮ້ານຂາຍຍ່ອຍຢາໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຈໍລະຈອນຈໍາໜ່າຍຜະລິດຕະພັນຢາປິ່ນປົວໂຄວິດ-19 ແລະ ເຄື່ອງທົດສອບແບບໄວ AgRDT (ຫຼື Antigen Test Kit, ATK) ກວດວິເຄາະການຕິດເຊື້ອໂຄວິດ-19.

- ອີງຕາມ ກົດໝາຍວ່າດ້ວຍຢາ ແລະ ຜະລິດຕະພັນການແພດ ສະບັບເລກທີ 07/ສພຊ, ລົງວັນທີ 21 ທັນວາ 2011;
- ອີງຕາມ ຄໍາສັ່ງວ່າດ້ວຍການນໍາເຂົ້າ, ຈໍລະຈອນຈໍາໜ່າຍ ແລະ ນໍາໃຊ້ ເຄື່ອງທົດສອບແບບໄວ AgRDT ເພື່ອກວດວິເຄາະຊອກຫາການຕິດເຊື້ອໂຄວິດ-19 ສະບັບເລກທີ 3994/ສທ, ລົງວັນທີ 30 ທັນວາ 202;
- ອີງຕາມ ຜົນການລົງຕິດຕາມ, ກວດກາຜະລິດຕະພັນປ້ອງກັນ ແລະ ປິ່ນປົວໂຄວິດ-19 ຢູ່ນະຄອນຫຼວງວຽງຈັນໃນລະຫວ່າງວັນທີ 6-7 ເມສາ 2022.

ຜ່ານການລົງຕິດຕາມ, ກວດກາການຈໍລະຈອນຈໍາໜ່າຍຜະລິດຕະພັນຢາປິ່ນປົວໂຄວິດ-19 ແລະ ເຄື່ອງທົດສອບແບບໄວ AgRDT (ຫຼື Antigen Test Kit, ATK) ກວດວິເຄາະການຕິດເຊື້ອໂຄວິດ-19 ໂດຍກົມອາຫານ ແລະ ຢາ ສົມທົບກອງກວດກາອາຫານ ແລະ ຢາ ແລະ ພາກສ່ວນກ່ຽວຂ້ອງ ເຫັນວ່າ ມີສະພາບການຈໍລະຈອນຈໍາໜ່າຍ ທີ່ບໍ່ຖືກຕ້ອງຕາມລະບຽບການຢ່າງແຜ່ຫຼາຍ ໃນບັນດາຮ້ານຂາຍຍ່ອຍຢາ ເຊິ່ງເປັນບັນຫາຫຼັກ ທີ່ສົ່ງຜົນກະທົບຕໍ່ການ ຮັບປະກັນດ້ານຄວາມປອດໄພ, ຄຸນນະພາບ ແລະ ປະສິດທິພາບໃນການກວດວິເຄາະ ແລະ ປິ່ນປົວໂຄວິດ-19 ຈຶ່ງໄດ້ມີການຍຶດອາຍັດ ແລະ ປັບໃໝຕາມລະບຽບການ.

ສະນັ້ນ ກົມອາຫານ ແລະ ຢາ ຈຶ່ງແຈ້ງມາຍັງບັນດາຮ້ານຂາຍຍ່ອຍຢາໃນຂອບເຂດທົ່ວປະເທດ ຈົ່ງຈັດຊື້ ແລະ ຈໍລະຈອນຈໍາໜ່າຍຢາປິ່ນປົວໂຄວິດ-19 ແລະ ເຄື່ອງທົດສອບແບບໄວ AgRDT ກວດວິເຄາະການຕິດເຊື້ອໂຄວິດ-19 ທີ່ໄດ້ຮັບອະນຸຍາດຈາກກົມອາຫານ ແລະ ຢາ ເທົ່ານັ້ນ ໂດຍຕິດຕາມຂໍ້ມູນຂ່າວສານບັນດາລາຍການທີ່ໄດ້ຮັບອະນຸຍາດຜ່ານເວັບໄຊ ແລະ ເຟດບຸກຂອງກົມອາຫານ ແລະ ຢາ (ລາຍລະອຽດດັ່ງເອກະສານຄັດຕິດ 1, 2 ແລະ 3). ໃນກໍລະນີເຈົ້າໜ້າທີ່ລົງຕິດຕາມ, ກວດກາ ພົບການຈໍລະຈອນຈໍາໜ່າຍທີ່ບໍ່ຖືກຕ້ອງ ຈະດໍາເນີນການຍຶດອາຍັດ, ປັບໃໝ ແລະ ປະຕິບັດມາດຕະການຕໍ່ຮ້ານຂາຍຍ່ອຍຢານັ້ນຕາມລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າກົມ**

ກະຊວງສາທາລະນະສຸກ
ກົມອາຫານ ແລະ ຢາ

ປອ. ດຣ. ບຸນຂູ ແກ້ວຫາວົງ

# ບັນຊີລາຍການຢານຳໃຊ້ໃນການປິ່ນປົວໂຄວິດ-19 ທີ່ໄດ້ຮັບອະນຸຍາດຈາກກົມອາຫານ ແລະ ຢາ

| ລ/ດ | ໂຮງງານ/ບໍລິສັດ | ຊື່ຜະລິດຕະພັນ | ເລກທີອະນຸຍາດ/ ວັນທີອະນຸຍາດ | ຮູບພາບ |
|---|---|---|---|---|
| 1 | ໂຮງງານຜະລິດຢາເລກ 3 | Molacovir (Molnupiravir 200 mg) ຊະນິດແຄັບຊູນ | **EUA-02L-01** 30ທັນວາ2021 |  |
| 2 | ໂຮງງານຜະລິດຢາຢວນຊູ | Molnucare (Molnupiravir 200mg) ຊະນິດ ແຄັບຊູນ | **EUA-01L-01** 30ທັນວາ2021 |  |
| 3 | ໂຮງງານຜະລິດຢາຢວນຊູ | Molnucare (Molnupiravir400mg) ຊະນິດແຄັບຊູນ | **EUA-04L-01** 30ທັນວາ2021 |  |
| | ໂຮງງານຜະລິດຢາລາວ ພັນທະມິດ | Molnupivir (Molnupiravir 200mg ) ຊະນິດເມັດ | **EUA-01L-06** 31ມັງກອນ 2022 |  |
| 4 | ໂຮງງານຜະລິດຢາລາວ ພັນທະມິດ | Molnupiravir 400 mg ຊະນິດເມັດ | **EUA-01L-05** 31ມັງກອນ 2022 |  |

| | | | | |
|---|---|---|---|---|
| 5 | ໂຮງງານຜະລິດຢາລາວ ພັນທະມິດ | Molnupivir (Molnupiravir 200mg) ແຄັບຊູນ | **EUA-01L-04** 31ມັງກອນ 2022 |  |
| 6 | ໂຮງງານຜະລິດຢາລາວ ພັນທະມິດ | Molnupivir (Molnupiravir 400mg) ແຄັບຊູນ | **EUA-01L-03** 31ມັງກອນ 2022 |  |
| 8 | ໂຮງງານຜະລິດຢາໂກດູ ຟາລາວ | Molcovir (Molnupiravir 200mg) ຊະນິດແຄັບຊູນ | **EUA-01L-09** 30 ມີນາ 2022 |  |
| 9 | ໂຮງງານຜະລິດຢາຕຸງ ເມີງ | Molavir (Molnupiravir 200mg) ຊະນິດແຄັບຊູນ | **EUA-01L-07** 01 ມີນາ 2022 |  |
| 10 | ໂຮງງານຜະລິດຢາ CBF | Monuvir (Molnupiravir 200mg) ຊະນິດແຄັບຊູນ | **EUA-01L-08** 30 ມີນາ 2022 |  |

| | | | | |
|---|---|---|---|---|
| 11 | ບໍລິສັດບີເອັມເອັສການ ຢາຈຳກັດຜູ້ດຽວ | HovidMolnupiravir 400mg ຊະນິດແຄັບຊູນ (ໂຮງງານຜະລິດໃນປະເທດ ຫວຽດນາມ) | **EUA-01I-01**<br>31ມັງກອນ 2022 |  |
| 12 | ບໍລິສັດ DKSH | Molnatris (Molnupiravir 200mg) ຊະນິດແຄັບຊູນ | **EUA-02I-01**<br>09 ມີນາ 2022 |  |

ເອກະສານຄັດຕິດທີ 1

**ບັນຊີລາຍການເຄື່ອງທົດສອບແບບໄວ AgRDT ເພື່ອກວດວິເຄາະຊອກຫາການຕິດເຊື້ອໂຄວິດ-19 ທີ່ໄດ້ຮັບອະນຸຍາດຈາກກົມອາຫານ ແລະ ຢາ, ກະຊວງສາທາລະນະສຸກ**

| ID | ຊື່ຜະລິດຕະພັນ | ຊື່ໂຮງງານຜູ້ຜະລິດ | ປະສິດທິພາບດ້ານຄລີນິກຢັ້ງຢືນ ຈາກ ໂຮງງານ | ເລກທີ ໄດ້ຮັບອານຸຍາດ EUA ຈາກ ກົມອາຫານ ແລະ ຢາ | ວັນທີ ໄດ້ຮັບອານຸຍາດ EUA ຈາກ ກົມອາຫານ ແລະ ຢາ | ບໍລິສັດນຳເຂົ້າ | ຮູບພາບ |
|---|---|---|---|---|---|---|---|
| 1 | Sure Status COVID-19 Antigen Card Test (Nasopharyngeal Swab) | Premier Medical Corporation Private Limited (India) | ຄວາມໄວ 94.4% (Sensitivity), ຄວາມຈຳເພາະ 100% (Specificity) | EUA-01-01 | 1/11/2021 | ບໍລິສັດ ວຽງທອງ ການຢາ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ |   |
| 2 | Panbio COVID-19 Ag Rapid Test Device (Nasal) | Abbott Rapid Diagnostic Jena GmbH (Germany) | ຄວາມໄວ 98.1% (Sensitivity) ຄວາມຈຳເພາະ 99.8% (Specificity) | EUA-01-02 | 1/11/2021 | ບໍລິສັດ ຊີບີເອັຟ ຟາຣມາ ຈຳກັດ (CBF) |   |
| 3 | Standard Q COVID-19 Ag Test (Nasopharyngeal Swab) | SD Biosensor, Inc (Korea) | _ ທົດສອບໃນປະເທດເຢຍລະມັນ ຄວາມໄວ 100% (Sensitivity) ຄວາມຈຳເພາະ 99.3% (Specificity) _ ທົດສອບໃນປະເທດ ເຢຍບຣາຊິນ ຄວາມໄວ 95.9% (Sensitivity) ຄວາມຈຳເພາະ 97.6% (Specificity) | EUA-01-03 | 18/11/2021 | ບໍລິສັດ ເອັສເຄ ເອັນການຄ້າ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ |   |

| | | | | | | | |
|---|---|---|---|---|---|---|---|
| 4 | COVID-19 (SARS-CoV-2) Antigen Test Kit (Kolloidal Gold) | Anhui DeepBlue Medical Technology,Co. ,Ltd (China) | ຄວາມໄວ 96.4% (Sensitivity)ຄວາມຈຳເພາະ 99,8% (Specificity) | EUA-02-07 | 22/02/2022 | ບໍລິສັດ ພອນທິດາ ຂາເຂົ້າ - ຂາອອກ |  |
| 5 | Covid-19 Antigen CARD Kit | Fosun Diagnostics (Shanghai) Co.,Ltd (China) | ຄວາມໄວ 96.1% (Sensitivity) ຄວາມຈຳເພາະ 99,5% (Specificity) | EUA-02-02 | 18/02/2022 | ບໍລິສັດ ການຢາ ມິດຕະພາບ ຂາ ອອກ-ຂາເຂົ້າ ຈຳກັດຜູ້ດຽວ |  |
| 6 | SARS-CoV-2 Rapid Antigen Test Kit (Colloidal Gold) | Genrui Biotech Inc. (China) | ຄວາມໄວ 98.13% (Sensitivity) ຄວາມຈຳເພາະ 100% (Specificity) | EUA-02-04 | 18/02/2022 | ບໍລິສັດ ເຄເອັສ ດີການຢາ ຂາອອກ - ຂາເຂົ້າ ຈຳກັດ ຜູ້ດຽວ |  |
| 7 | One Step Rapid Test, SARS-CoV-2 Rapid Antigen Test (Immunochromatograpphy Assay) | Qingdao Hightop Biotech Co.,Ltd (China) | ຄວາມໄວ 93% (Sensitivity) ຄວາມຈຳເພາະ 99% (Specificity) | EUA-02-03 | 18/02/2022 | ບໍລິສັດ ເອັນເອັນຊີ ຟາກມາຈຳກັດ |  |

| | | | | | | | |
|---|---|---|---|---|---|---|---|
| 8 | Sure Status COVID-19 Antigen Card Test (Home Test) | Premier Medical Corporation Private Limited (India) | ຄວາມໄວ 95% (Sensitivity) ຄວາມຈຳເພາະ100% (Specificity) | EUA-02-01 | 18/02/2022 | ບໍລິສັດ ວຽງທອງ ການຢາ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ |  |
| 9 | 2019-nCoV Antigen Test, W634P0009 (Lateral Flow Method) | Guangzhou Wondfo Biotech Co.,Ltd (China) | ຄວາມໄວ 97,83% (Sensitivity) ຄວາມຈຳເພາະ 99,08% (Specificity) | EUA-02-06 | 22/02/2022 | ບໍລິສັດ ໄຊ ມັງກອນການຢາ ຈຳກັດຜູ້ດຽວ |  |
| 10 | 2019-nCoV Antigen Test, W196P0010 (Lateral Flow Method) | Guangzhou Wondfo Biotech Co.,Ltd (China) | ຄວາມໄວ 97,83% (Sensitivity) ຄວາມຈຳເພາະ 99,08% (Specificity) | EUA-02-05 | 22/02/2022 | ບໍລິສັດ ໄຊ ມັງກອນການຢາ ຈຳກັດຜູ້ດຽວ |  |

ເອກະສານຄັດຕິດທີ 1

ຂໍ້ແນະນຳວິທີການຕິດຕາມຂໍ້ມູນຜະລິດຕະພັນເຄື່ອງທົດສອບແບບໄວ AgRDT (ຫຼື Antigen Test Kit, ATK) ກວດວິເຄາະຫາການຕິດເຊື້ອໂຄວິດ-19.

1. ການຕິດຕາມໃນເວັບໄຊຂອງກົມອາຫານ ແລະ ຢາ

1) ພິມເຂົ້າໃນເວັບໄຊ www.fdd.gov.la




2) ໃນໜ້າທຳອິດຂອງເວັບໄຊ ເລື່ອນລົງຈົນທ້າຍສຸດ ແລ້ວເຂົ້າເບິ່ງບັນຊີຜະລິດຕະພັນກວດໂຄວິດ-19

ບັນຊີ ຜະລິດຕະພັນ ກວດເຊື້ອໂຄວິດ-19 | ບົດຄວາມທົ່ວໄປ | ບົດຄວາມຮູ້ດ້ານຢາ ແລະ ຜະລິດຕະພັນການແພດ | ບົດຄວາມຮູ້ດ້ານອາຫານປອດໄພ

| ID | ຊື່ຜະລິດຕະພັນ | ໂຮງງານຜູ້ຜະລິດ | ປະສິດທິພາບດ້ານ ຄລີນິກອ້າງອີງ ຈາກໂຮງງານ | ປະສິດທິພາບດ້ານ ຄລີນິກອ້າງອີງ ໂດຍສູນວິເຄາະລະບາດວິທະຍາ | ເລກທີ ໄດ້ຮັບອານຸຍາດ EUA ຈາກກົມອາຫານ ແລະ ຢາ | ວັນທີ ໄດ້ຮັບອານຸຍາດ EUA ຈາກກົມອາຫານ ແລະ ຢາ |
|---|---|---|---|---|---|---|
| 1 | Sure Status COVID-19 Antigen Card Test (Nasopharyngeal Swab) | Premier Medical Corporation Private Limited (India) | ຄວາມໄວ 94.4% (Sensitivity), ຄວາມຈຳເພາະ100% (Specificity) | ບໍ່ໄດ້ທົດສອບຄືນ ເນື່ອງຈາກເປັນເຄື່ອງທົດສອບແບບໄວທີ່ຢູ່ໃນ EUL ຂອງອົງການອະນາໄມໂລກ | EUA-01-01 | 01/11/2021 |
| 2 | Panbio COVID-19 Ag Rapid Test Device (Nasal) | Abbott Rapid Diagnostic Jena GmbH (Germany) | ຄວາມໄວ 98.1% (Sensitivity) ຄວາມຈຳເພາະ 99.8% (Specificity) | ບໍ່ໄດ້ທົດສອບຄືນ ເນື່ອງຈາກເປັນເຄື່ອງທົດສອບແບບໄວທີ່ຢູ່ໃນ EUL ຂອງອົງການອະນາໄມໂລກ | EUA-01-02 | 01/11/2021 |
| 3 | Standard Q COVID-19 Ag Test (Nasopharyngeal Swab) | SD Biosensor, Inc (Korea) | - ທົດສອບໃນປະເທດເຢຍລະມັນ ຄວາມໄວ 100% (Sensitivity) ຄວາມຈຳເພາະ 99.3% (Specificity), ທົດສອບໃນປະເທດບຣາຊິນ | ບໍ່ໄດ້ທົດສອບຄືນ ເນື່ອງຈາກເປັນເຄື່ອງທົດສອບແບບໄວທີ່ຢູ່ໃນ EUL ຂອງອົງການອະນາໄມໂລກ | EUA-01-03 | 18/11/2021 |

2. ການຕິດຕາມໃນເຟດບຸກຂອງກົມອາຫານ ແລະ ຢາ

1) ເຂົ້າໄປໃນເຟດບຸກຂອງທ່ານ ຈາກນັ້ນໃນເຄື່ອງໝາຍຊອກຫາ ພິມ "ກົມອາຫານ ແລະ ຢາ" ແລ້ວກົດເຂົ້າໄປ




2) ເຂົ້າເບິ່ງປະຫວັດການແຈ້ງການຕ່າງໆຂອງກົມອາຫານ ແລະ ຢາ ໂດຍເຂົ້າເບິ່ງໃນ "Posts"




3) ບັນຊີລາຍການເຄື່ອງທົດສອບແບບໄວທີ່ໄດ້ຮັບອະນຸຍາດ ແລະ ແຈ້ງເພີ່ມຕື່ມໃນເພສ ກົມອາຫານ ແລະ ຢາ ຄັ້ງຫຼ້າສຸດວັນທີ 3 ມີນາ 2022 ແລະ ຈະມີການອັບເດດທຸກຄັ້ງທີ່ມີລາຍການໃໝ່ໄດ້ຮັບອະນຸຍາດເພີ່ມຕື່ມ ຫຼື ມີການເພີກຖອນລາຍການທີ່ໄດ້ຮັບອະນຸຍາດຜ່ານມາ



ສອບຖາມຂໍ້ມູນເພີ່ມເຕີມ: ພະແນກຄຸ້ມຄອງຢາ ແລະ ອຸປະກອນການແພດ, ກົມອາຫານ ແລະ ຢາ ໂທລະສັບ: 021 243657